ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 1055/ຮສສ
ນະຄອນຫຼວງວຽງຈັນ, ວັນທີ 19/04/23

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຄງການເກັບກູ້ລະເບີດແຫ່ງຊາດ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 602/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ສະບັບເລກທີ 4999/ຮສສ, ລົງວັນທີ 09 ທັນວາ 2022;
- ອີງຕາມ ໜັງສືສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 111/ຈພ, ລົງວັນທີ 27 ມັງກອນ 2023.

## ລັດຖະມົນຕີອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ແນໃສ່ເພື່ອຮັບປະກັນການເຄື່ອນໄຫວວຽກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ໂຄງການເກັບກູ້ລະເບີດແຫ່ງຊາດ ຂຽນດ້ວຍຕົວອັກສອນຫຍໍ້ວ່າ: "ຄກລ" ແລະ ມີຊື່ເປັນພາສາອັງກິດ ວ່າ: Lao National Unexploded Ordnance Programme ແລະ ຂຽນດ້ວຍຕົວອັກສອນ ຫຍໍ້ວ່າ: "UXO Lao" ແມ່ນອົງການປະຕິບັດງານແຫ່ງຊາດ ທີ່ຂຶ້ນກັບ ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຊິ່ງມີພາລະບົດບາດໃນການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ, ສຳຫຼວດ, ເກັບກູ້ ແລະ ທຳລາຍລະເບີດບໍ່ທັນ

ແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໂດຍສອດຄ່ອງຕາມມາດຕະຖານແຫ່ງຊາດ ແລະ ຖືກຕ້ອງຕາມແນວທາງນະໂຍບາຍຂອງລັດຖະບານ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງຕ່າງໆ ຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ເປົ້າໝາຍການພັດທະນາແບບຍືນຍົງ ທີ 18 "ການດຳລົງຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ", ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ, ແຜນພັດທະນາວຽກງານແຮງງານ ແລະ ສະຫວັດດີການສັງຄົມ ແລະ ຍຸດທະສາດແຫ່ງຊາດ ກ່ຽວກັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ມາເປັນໂຄງການ ແລະ ແຜນງານລະອຽດ;
2. ຄົ້ນຄວ້າສ້າງແຜນກິດຈະກຳ, ແຜນປະຕິບັດງານ ແລະ ແຜນງົບປະມານ ປະຈຳປີ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໃນຂອບເຂດທົ່ວປະເທດ;
3. ຈັດຕັ້ງດຳເນີນການໂຄສະນາສຶກສາຄວາມສ່ຽງຈາກລະເບີດບໍ່ທັນແຕກ, ການສຳຫຼວດ, ເກັບກູ້ ແລະ ທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ, ການກວດກາຄຸນນະພາບ, ການຄຸ້ມຄອງຖານຂໍ້ມູນ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
4. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄົ້ນຄວ້າ ແລະ ສ້າງເອກະສານສັນຍາໂຄງການຮ່ວມມືກັບບັນດາອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອລະດົມການຊ່ວຍເຫຼືອທາງດ້ານທຶນ ແລະ ເຕັກນິກວິຊາການ ເຂົ້າໃນການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຕາມພາລະບົດບາດ;
5. ຕິດຕາມ, ຊຸກຍູ້, ກວດກາ, ປະເມີນຜົນ ການຈັດຕັ້ງປະຕິບັດງານ ແລະ ການນຳໃຊ້ງົບປະມານ ຂອງຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳບັນດາແຂວງ ແຕ່ລະໄລຍະ;
6. ອຳນວຍຄວາມສະດວກການລົງຕິດຕາມ ແລະ ຊຸກຍູ້ ຂອງຄະນະກຳມະການຄຸ້ມຄອງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຂັ້ນສູນກາງ, ທ້ອງຖິ່ນ ແລະ ຄູ່ຮ່ວມງານ ເປັນແຕ່ລະໄລຍະ;
7. ຄົ້ນຄວ້າສ້າງ, ປັບປຸງຂໍ້ກຳນົດ ແລະ ກົດລະບຽບ ວຽກງານຄຸ້ມຄອງບໍລິຫານ ແລະ ວຽກງານການປະຕິບັດງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
8. ປະສານງານ ແລະ ອຳນວຍຄວາມສະດວກໃຫ້ແກ່ ຄະນະກວດສອບ ແລະ ຄະນະປະເມີນຜົນທັງພາຍໃນ ແລະ ພາຍນອກ ເພື່ອດຳເນີນການກວດສອບບັນຊີ, ຊັບສິນ ແລະ ປະເມີນຜົນການປະຕິບັດງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຕາມລະບຽບການ;
9. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບບັນດາຄູ່ຮ່ວມງານ ກັບໂຄງການເກັບກູ້ລະເບີດແຫ່ງຊາດ;
10. ຄົ້ນຄວ້າ ແລະ ສະເໜີຂໍອະນຸມັດຮັບເອົາ ແລະ ຄຸ້ມຄອງຊ່ຽວຊານຕ່າງປະເທດ ປະຈຳຢູ່ໂຄງການເກັບກູ້ລະເບີດແຫ່ງຊາດ;
11. ຄົ້ນຄວ້າ ແລະ ສະເໜີຂໍອະນຸມັດຍົກເວັ້ນພາສີນຳເຂົ້າ ສຳລັບພາຫະນະ ແລະ ວັດຖຸອຸປະກອນທີ່ຮັບໃຊ້ເຂົ້າໃນວຽກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ນຳພາກສ່ວນກ່ຽວຂ້ອງຕາມລະບຽບການ;
12. ຄຸ້ມຄອງ, ນຳໃຊ້ ແລະ ປົກປັກຮັກສາຫ້ອງການ, ຫ້ອງວາງສະແດງ, ພາຫະນະ ແລະ ອຸປະກອນຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
13. ສຶກສາອົບຮົມ ດ້ານແນວຄິດ, ທັດສະນະຄະຕິ, ນ້ຳໃຈຮັກຊາດ; ຕິດຕາມ, ຄຸ້ມຄອງ, ນຳໃຊ້, ບຳລຸງກໍ່ສ້າງ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນ ຕໍ່ພະນັກງານໂຄງການເກັບກູ້ລະເບີດແຫ່ງຊາດ ແຕ່ສູນກາງຮອດທ້ອງຖິ່ນຕາມລະບຽບການ ແລະ ຕາມພາລະບົດບາດ;

14. ຄົ້ນຄວ້າ ແລະ ສ້າງແຜນບຳລຸງ, ກໍ່ສ້າງ, ຝຶກອົບຮົມພະນັກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
15. ຈັດກອງປະຊຸມ ພາຍໃນ ແລະ ຄູ່ຮ່ວມງານ ເພື່ອສະຫຼຸບຕີລາຄາປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຕາມພາລະບົດບາດ;
16. ເຂົ້າຮ່ວມກອງປະຊຸມຕ່າງໆ ພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງຂັ້ນເທິງ;
17. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

1. ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງສ້າງຕັ້ງ, ປັບປຸງ, ໂຈະ ຫຼື ລົບລ້າງ ກົງຈັກການຈັດຕັ້ງທີ່ຂຶ້ນກັບການຄຸ້ມຄອງ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
2. ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງ ຮັບບັນຈຸ, ຈັດວາງ, ປະເມີນ, ສັບຊ້ອນ, ລົງລາຍເຊັນ ແລະ ຍົກເລີກສັນຍາແຮງງານ, ເລື່ອນຂັ້ນເງິນເດືອນ, ຍ້ອງຍໍ, ປົດຕຳແໜ່ງ ຫຼື ປະຕິບັດວິໄນຕໍ່ພະນັກງານ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ຕາມລະບຽບການກ່ຽວຂ້ອງ;
3. ຄົ້ນຄວ້າ ແລະ ນຳສະເໜີພາກສ່ວນກ່ຽວຂ້ອງໃນການຮັບເອົາ ຫຼື ຍົກເລີກສັນຍາ ແລະ ຄຸ້ມຄອງ ຊ່ຽວຊານຕ່າງປະເທດ ປະຈຳຢູ່ໂຄງການເກັບກູ້ລະເບີດແຫ່ງຊາດ ຕາມລະບຽບການ;
4. ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງ ພິຈາລະນາຮັບຮອງແຜນການ, ໂຄງການ, ຂໍ້ຕົກລົງ, ຄຳສັ່ງ, ລະບຽບການ, ແຈ້ງການ ແລະ ມາດຕະຖານການປະຕິບັດງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຕາມພາລະບົດບາດ;
5. ພົວພັນ ແລະ ຮ່ວມມືກັບບັນດາຂະແໜງການກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ໃນວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຕາມຄວາມຮັບຜິດຊອບຂອງຕົນ ແລະ ຕາມການຕົກລົງ ຂອງຂັ້ນເທິງ;
6. ຮຽກປະຊຸມ, ສະຫຼຸບ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ແລະ ວາງແຜນການເຄື່ອນໄຫວວຽກງານ ຕາມຂອບເຂດຮັບຜິດຊອບຂອງຕົນ;
7. ເຂົ້າຮ່ວມຄົ້ນຄວ້າເນື້ອໃນ, ເຈລະຈາ ແລະ ເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ກັບຄູ່ຮ່ວມງານ, ອົງການຈັດຕັ້ງສາກົນ ຕາມຂອບເຂດຮັບຜິດຊອບຂອງຕົນ ແລະ ຕາມການຕົກລົງຂອງຂັ້ນເທິງ;
8. ຄົ້ນຄວ້າ ແລະ ສະເໜີຂໍອະນຸມັດຈັດກອງປະຊຸມສຳມະນາ, ຝຶກອົບຮົມດ້ານວິຊາການ ຈາກຂັ້ນເທິງຕາມລະບຽບການ;
9. ລົງລາຍເຊັນໃສ່ເອກະສານທາງລັດຖະການ ຂອງໂຄງການເກັບເກັບກູ້ລະເບີດແຫ່ງຊາດ ຕາມພາລະບົດບາດ;
10. ປະຕິບັດສິດອື່ນໆຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບກົງຈັກການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົງຈັກຂອງໂຄງການເກັບກູ້ລະເບີດແຫ່ງຊາດ ປະກອບດ້ວຍ:

1. ໜ່ວຍງານບໍລິຫານ;
2. ໜ່ວຍງານຄຸ້ມຄອງບຸກຄະລາກອນ;
3. ໜ່ວຍງານການເງິນ;
4. ໜ່ວຍງານແຜນການ ແລະ ການຮ່ວມມືສາກົນ;

5. ໜ່ວຍງານປະຊາສຳພັນ;
6. ໜ່ວຍງານສະໜອງ ແລະ ຈັດຊື້;
7. ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ;
8. ໜ່ວຍງານສຳຫຼວດ ແລະ ເກັບກູ້;
9. ໜ່ວຍງານຖານຂໍ້ມູນ ແລະ ໄອທີ;
10. ໜ່ວຍງານກວດກາຄຸນນະພາບ;
11. ຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳ ແຂວງ ທີ່ມີຖານະທຽບເທົ່າໜ່ວຍງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ (ຫ້ອງການໃຫຍ່ ນະຄອນຫຼວງວຽງຈັນ), ເຊິ່ງມີພາລະບົດບາດ ກຳນົດໄວ້ສະເພາະ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

1. ຜູ້ອຳນວຍການ 01 ທ່ານ ໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຈາກ ທ່ານປະທານຄະນະກຳມະການຄຸ້ມຄອງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຂັ້ນສູນກາງ ໂດຍຜ່ານການຄັດເລືອກຕາມລະບຽບການ ເຊິ່ງຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ເປັນຜູ້ສະເໜີ ໂດຍຜ່ານ ກົມຈັດຕັ້ງ ແລະ ພະນັກງານ, ມີຄວາມຮັບຜິດຊອບໂດຍກົງຕໍ່ຂັ້ນເທິງ ໃນການຈັດຕັ້ງປະຕິບັດໜ້າທີ່ ແລະ ສິດ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້. ໃນເວລາຕິດຂັດ ຜູ້ອຳນວຍການ ຕ້ອງມອບສິດໃຫ້ຮອງຜູ້ອຳນວຍການທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ;
2. ຮອງຜູ້ອຳນວຍການ 02 ທ່ານ ໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຈາກທ່ານປະທານຄະນະກຳມະການຄຸ້ມຄອງການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຂັ້ນສູນກາງ ໂດຍຜ່ານການຄັດເລືອກຕາມລະບຽບການ ເຊິ່ງຜູ້ອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ ເປັນຜູ້ສະເໜີໂດຍຜ່ານຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ແລະ ກົມຈັດຕັ້ງ ແລະ ພະນັກງານ, ຮອງຜູ້ອຳນວຍການ ຊ່ວຍຜູ້ອຳນວຍການໃນການຊີ້ນຳວຽກງານໃດໜຶ່ງຕາມການມອບໝາຍ ຂອງຜູ້ອຳນວຍການ; ຮອງຜູ້ອຳນວຍການເປັນຜູ້ຮັກສາການແທນໃນເວລາຜູ້ອຳນວຍການຕິດຂັດ;
3. ຫົວໜ້າ, ຮອງຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການ ຕາມຕຳແໜ່ງງານທີ່ກຳນົດໄວ້ ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ, ສັນຍາແຮງງານ ແລະ ຍົກເລີກສັນຍາແຮງງານ ຈາກຜູ້ອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ, ທີ່ຜ່ານການຄັດເລືອກຕາມລະບຽບການຂອງໂຄງການ ແລະ ການເຫັນດີຂອງປະທານຄະນະກຳມະການຄຸ້ມຄອງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຂັ້ນສູນກາງ;

   ຫົວໜ້າ, ຮອງຫົວໜ້າຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳແຂວງ ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ, ສັນຍາແຮງງານ ແລະ ຍົກເລີກສັນຍາແຮງງານ ຈາກຜູ້ອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ, ທີ່ຜ່ານການຄັດເລືອກຕາມລະບຽບການຂອງໂຄງການ ໂດຍຜ່ານການເຫັນດີຂອງປະທານຄະນະກຳມະການຄຸ້ມຄອງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຂັ້ນແຂວງ ແລະ ຂັ້ນສູນກາງ.

## ໝວດທີ 4
## ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະໜ່ວຍງານ

**ມາດຕາ 7 ໜ່ວຍງານບໍລິຫານ**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ກົດໝາຍ, ລະບຽບການ ຂອງລັດຖະບານ ແລະ ລະບຽບ

ການສະເພາະ ທີ່ໄດ້ຕົກລົງກັນລະຫວ່າງ ລັດຖະບານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ບັນດາຄູ່ຮ່ວມງານອື່ນໆ ກ່ຽວກັບວຽກງານບໍລິຫານ ແຕ່ລະໄລຍະ;

2. ເປັນໃຈກາງໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາພາຍໃນ ແລະ ພາຍນອກ ເພື່ອກວດສອບບັນຊີຊັບສິນ, ອຸປະກອນ ແລະ ພາຫະນະ ປະຈຳປີ;
3. ຮັບຜິດຊອບວຽກງານພິທີການ, ຂຶ້ນແຜນຈັດກອງປະຊຸມພາຍໃນ ໂຄງການເກັບກູ້ລະເບີດແຫ່ງຊາດ ແຕ່ລະໄລຍະ ເຊັ່ນ: ກອງປະຊຸມຄະນະອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ, ກອງປະຊຸມພາຍໃນຫ້ອງການໃຫຍ່ໂຄງການເກັບກູ້ລະເບີດແຫ່ງຊາດ, ກອງປະຊຸມພົບປະ ຂອງຄະນະອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ ກັບພາກສ່ວນຕ່າງໆ ແລະ ກອງປະຊຸມອື່ນໆ;
4. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຮ່າງແຜນການເຄື່ອນໄຫວ ຂອງຄະນະອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ ເປັນແຕ່ລະໄລຍະ;
5. ຮັບຜິດຊອບວຽກງານເລຂານຸການ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ແລະ ບັນທຶກກອງປະຊຸມພົບປະ ຂອງຄະນະອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ;
6. ຮັບຜິດຊອບວຽກງານຮັກສາຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍ ແລະ ວຽກງານປ້ອງກັນຄວາມສະຫງົບ, ຄວາມປອດໄພ ຂອງສຳນັກງານຫ້ອງການ ໂຄງການເກັບກູ້ລະເບີດແຫ່ງຊາດ;
7. ຮັບຜິດຊອບວຽກງານເອກະສານທາງລັດຖະການ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເຊັ່ນ: ເອກະສານ ຂາເຂົ້າ - ຂາອອກ, ຈັດສົ່ງເອກະສານ, ພິມເອກະສານ, ອັດສຳເນົາ ແລະ ອື່ນໆ;
8. ຄຸ້ມຄອງ ແລະ ປົກປັກຮັກສາຊັບສິນສຳຄັນຕ່າງໆເຊັ່ນ: ຕາປະທັບຕ່າງໆຂອງໂຄງການ, ກາຈ້ຳຊື່ຂອງຄະນະອຳນວຍການ, ຍານພາຫະນະ, ເຄື່ອງອັດສຳເນົາເອກະສານ, ຄອມພິວເຕີ, ເຄື່ອງພິມ, ໂທລະສານ, ເຄຫາສະຖານ ແລະ ຊັບສົມບັດອື່ນໆ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
9. ຄົ້ນຄວ້າການຂຶ້ນແຜນ, ການຄຸ້ມຄອງ ແລະ ການຖອນເງິນບ້ວງງົບປະມານບໍລິຫານ, ການນຳໃຊ້ນ້ຳມັນລົດບໍລິຫານ, ການສ້ອມແປງພາຫະນະ ແລະ ຮັບໃຊ້ວຽກລວມອື່ນໆ ຂອງຫ້ອງການໃຫຍ່ໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳ ນະຄອນຫຼວງວຽງຈັນ;
10. ຄົ້ນຄວ້າ ແລະ ປັບປຸງບັນດາຮ່າງເອກະສານທາງການຕ່າງໆ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໃຫ້ມີຄວາມເອກະພາບໃນການນຳໃຊ້ ແລະ ສອດຄ່ອງກັບລະບຽບກົດໝາຍວາງອອກ;
11. ຄົ້ນຄວ້າການຈັດກອງປະຊຸມ, ສຳມະນາ, ການຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບວຽກງານບໍລິຫານ;
12. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຜູ້ອຳນວຍການ;
13. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 8 ໜ່ວຍງານຄຸ້ມຄອງບຸກຄະລາກອນ**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ກົດໝາຍ, ລະບຽບການ ຂອງລັດຖະບານ ແລະ ລະບຽບການສະເພາະ ທີ່ໄດ້ຕົກລົງກັນລະຫວ່າງ ລັດຖະບານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ, ບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານອື່ນໆ ກ່ຽວກັບວຽກງານຄຸ້ມຄອງບຸກຄະລາກອນ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ແຕ່ລະໄລຍະ;
2. ປະສານສົມທົບກັບໜ່ວຍງານກ່ຽວຂ້ອງ ຄົ້ນຄວ້າການພັດທະນາ ແລະ ປັບປຸງການຈັດຕັ້ງ, ແບບແຜນວິທີເຮັດວຽກ ແລະ ໜ້າທີ່ຮັບຜິດຊອບ (Job description) ຂອງບັນດາໜ່ວຍງານ, ຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳແຂວງ ແລະ ພະນັກງານວິຊາການ ແຕ່ລະຕຳແໜ່ງງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ທັງສູນກາງ ແລະ ທ້ອງຖິ່ນ;

3. ປະສານສົມທົບກັບໜ່ວຍງານກ່ຽວຂ້ອງ ຄົ້ນຄວ້າສ້າງແຜນພັດທະນາພະນັກງານ, ຝຶກອົບຮົມນັກເກັບກູ້ໃໝ່, ຍົກລະດັບຄວາມຮູ້ຄວາມສາມາດ ແລະ ທັກສະໃນດ້ານຕ່າງໆ ກ່ຽວກັບວຽກງານຄຸ້ມຄອງບໍລິຫານ ແລະ ການປະຕິບັດງານພາກສະໜາມ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ພະນັກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ທັງໃນໄລຍະສັ້ນ ແລະ ໄລຍະຍາວ;
4. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການດຳເນີນຮັບສະໝັກ, ການຄັດເລືອກ ແລະ ການສຳພາດເອົາພະນັກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຕາມລະບຽບການ;
5. ຄົ້ນຄວ້າຮ່າງສັນຍາການເປັນພະນັກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
6. ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວວຽກງານຂອງພະນັກງານໂຄງການເກັບກູ້ລະເບີດແຫ່ງຊາດ;
7. ຄົ້ນຄວ້າການທຽບ, ການເລື່ອນ ຊັ້ນ/ຂັ້ນ ເງິນເດືອນ ໃຫ້ພະນັກງານໂຄງການເກັບກູ້ລະເບີດແຫ່ງຊາດ ຕາມລະບຽບການ;
8. ປະສານສົມທົບກັບໜ່ວຍງານການເງິນ ຄົ້ນຄວ້າຄິດໄລ່ ເງິນເດືອນ, ເງິນປະກັນສັງຄົມ ແລະ ອາກອນເງິນເດືອນ ຂອງພະນັກງານໂຄງການເກັບກູ້ລະເບີດແຫ່ງຊາດ ຕາມລະບຽບການ;
9. ຄົ້ນຄວ້າ ແລະ ປະເມີນຜົນການປະຕິບັດວຽກງານ ປະຈຳປີ ຂອງພະນັກງານໂຄງການເກັບກູ້ລະເບີດແຫ່ງຊາດ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ການຕໍ່ສັນຍາ ຫຼື ຍົກເລີກສັນຍາ;
10. ຄົ້ນຄວ້າ ແລະ ສະເໜີ ການປະຕິບັດວິໄນຕໍ່ພະນັກງານຜູ້ທີ່ລະເມີດລະບຽບ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ວາງອອກ ຢ່າງເຂັ້ມງວດ;
11. ຄຸ້ມຄອງ ແລະ ນຳໃຊ້ຖານຂໍ້ມູນຄຸ້ມຄອງພະນັກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
12. ຄົ້ນຄວ້າ ແລະ ສະເໜີ ຂໍໃບອະນຸຍາດພັກເຊົາ, ເຮັດວຽກ, ວີຊາ, ໜັງສືຜ່ານແດນ, ບັດປະຈຳຕົວຕ່າງດ້າວ ແລະ ໃບອະນຸຍາດຂັບຂີ່ຍານພາຫະນະ ຢູ່ ສປປ ລາວ ໃຫ້ແກ່ຊ່ຽວຊານ ແລະ ທີ່ປຶກສາຕ່າງປະເທດ ທີ່ປະຈຳຢູ່ໂຄງການເກັບກູ້ລະເບີດແຫ່ງຊາດ ທັງສູນກາງ ແລະ ທ້ອງຖິ່ນ ຕາມລະບຽບການກຳນົດ;
13. ຄົ້ນຄວ້າ ແລະ ຂໍອະນຸມັດຈັດກອງປະຊຸມສຳມະນາ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບວຽກງານຄຸ້ມຄອງບຸກຄະລາກອນ;
14. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຜູ້ອຳນວຍການ;
15. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 9 ໜ່ວຍງານການເງິນ**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງລັດຖະບານ ແລະ ລະບຽບການສະເພາະທີ່ໄດ້ຕົກລົງກັນລະຫວ່າງ ລັດຖະບານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ, ບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານອື່ນໆ ກ່ຽວກັບວຽກງານການເງິນ ເພື່ອສະໜັບສະໜູນເຂົ້າໃນວຽກລະອຽດ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
2. ຊ່ວຍກະກຽມເອກະສານຮ່າງສັນຍາ ລະຫວ່າງ ໂຄງການເກັບກູ້ລະເບີດແຫ່ງຊາດ ກັບ ຕາງໜ້າຜູ້ໃຫ້ທຶນ ແລະ ເອກະສານອື່ນໆ ເພື່ອສົ່ງໃຫ້ຕາງໜ້າຜູ້ໃຫ້ທຶນ ຕາມການມອບໝາຍຂອງຜູ້ອຳນວຍການ;
3. ປະສານສົມທົບກັບໜ່ວຍງານກ່ຽວຂ້ອງ ພາຍໃນໂຄງການເກັບກູ້ລະເບີດແຫ່ງຊາດ ເພື່ອເກັບກຳ, ສັງລວມຂໍ້ມູນ ແລະ ສ້າງແຜນງົບປະມານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳເດືອນ, ໄຕມາດ, ປະຈຳ 06 ເດືອນ, ປະຈຳ 09 ເດືອນ ແລະ ປະຈຳປີ;
4. ປະສານສົມທົບກັບໜ່ວຍງານແຜນການ ແລະ ການຮ່ວມມືສາກົນ ແລະ ບັນດາໜ່ວຍງານທີ່ກ່ຽວຂ້ອງ ໃນການຈັດສັນແຜນງົບປະມານຄືນໃໝ່ ພາຍຫຼັງທີ່ໄດ້ຈັດຕັ້ງປະຕິບັດແຜນງົບປະມານດັ່ງກ່າວ ໃນໄລຍະ 06

ເດືອນ ຕົ້ນປີ ເພື່ອສະເໜີຕໍ່ ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ບັນດາປະເທດຜູ້ໃຫ້ທຶນ ເພື່ອເຫັນດີຮັບຮອງໃຫ້ຈັດຕັ້ງປະຕິບັດ;

5. ກວດກາ ແລະ ສັງລວມແຜນງົບປະມານປະຈຳເດືອນ ເພື່ອສະເໜີຂໍອະນຸມັດເບີກຈ່າຍ ຂອງຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳແຂວງ;
6. ຄຸ້ມຄອງ ລາຍຮັບ-ລາຍຈ່າຍ ທັງໝົດ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໂດຍການບັນທຶກເຂົ້າໃນລະບົບໂປຣແກຣມບັນຊີ ເພື່ອສ້າງບົດລາຍງານການເງິນ ປະຈຳເດືອນ, ປະຈຳໄຕມາດ, ປະຈຳ 06 ເດືອນຕົ້ນປີ ແລະ ປະຈຳປີ ເພື່ອລາຍງານໃຫ້ ຄະນະອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ ແລະ ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຊາບເປັນປະຈຳແຕ່ລະໄລຍະ;
7. ລົງຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດແຜນງົບປະມານ, ກວດກາເອກະສານການເງິນ ແລະ ການສະຫຼຸບລາຍຮັບ-ລາຍຈ່າຍ ຂອງຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳແຂວງ ເພື່ອສະຫຼຸບ ແລະ ລາຍງານໃຫ້ ຄະນະອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ ຊາບເປັນປະຈຳແຕ່ລະໄລຍະ;
8. ຮັບປະກັນການເກັບຮັກສາເອກະສານການເງິນ ໃຫ້ເປັນລະບົບ, ມີຄວາມປອດໄພ ແລະ ສາມາດກວດສອບໄດ້ທຸກເວລາ;
9. ຮັບປະກັນການຕິດຕາມ, ກວດກາ ແລະ ລາຍງານແຜນນຳໃຊ້ງົບປະມານລວມ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ, ໂຄງການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍຢ່າງເປັນລະບົບ, ໃຫ້ທັນກັບສະພາບ, ທັນກັບເວລາທີ່ກຳນົດໄວ້, ຖືກຕ້ອງຄົບຖ້ວນ ແລະ ສາມາດກວດສອບໄດ້;
10. ສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນງົບປະມານ ແລະ ລາຍຈ່າຍ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ເພື່ອລາຍງານໃຫ້ຄະນະອຳນວຍການ, ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ແລະ ບັນດາປະເທດຜູ້ໃຫ້ທຶນຊາບເປັນປະຈຳແຕ່ລະໄລຍະ;
11. ຄົ້ນຄວ້າ ແລະ ປະຕິບັດລະບຽບການເງິນ-ການບັນຊີ ແລະ ປະຕິບັດທຸກທຸລະກຳທາງການເງິນ ຂອງກະຊວງການເງິນ ໄດ້ກຳນົດອອກ ແລະ ລະບຽບການ ຂອງທະນາຄານແຫ່ງ ສປປ ລາວ;
12. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ອຳນວຍຄວາມສະດວກໃຫ້ແກ່ການກວດສອບພາຍໃນ-ພາຍນອກ ເປັນຕົ້ນແມ່ນ ອົງການກວດສອບແຫ່ງລັດ, ອົງການກວດສອບອິດສະຫຼະຈາກພາຍນອກ ຂອງຜູ້ໃຫ້ທຶນ ແລະ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
13. ເປັນເຈົ້າການຈັດຕັ້ງປະຕິບັດ ສັນຍາຮ່ວມມືພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານການເງິນ-ການບັນຊີ;
14. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການເງິນ-ການບັນຊີ ຕາມການມອບໝາຍຂອງຜູ້ອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ;
15. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຜູ້ອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ;
16. ປະສານສົມທົບກັບ ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ, ຄຸ້ມຄອງການຮັບ-ຈ່າຍ ແຫຼ່ງທຶນຊ່ວຍເຫຼືອ ຂອງບັນດາປະເທດທີ່ໃຫ້ຊ່ວຍເຫຼືອ ແກ່ວຽກງານເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ, ພ້ອມທັງສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນງົບປະມານ ຂອງແຫຼ່ງທຶນຕ່າງໆ ສຳລັບວຽກງານເກັບກູ້ລະເບີດ ໃຫ້ຄະນະອຳນວຍການ ແລະ ພາກສ່ວນກ່ຽວຂ້ອງຊາບ ເປັນປະຈຳແຕ່ລະໄລຍະ;
17. ກວດກາຄວາມຖືກຕ້ອງ ຂອງການຄິດໄລ່, ການເບີກຈ່າຍເງິນເດືອນ, ອັດຕາກິນ-ເບ້ຍລ້ຽງ ຂອງພະນັກງານ ແລະ ການເສຍພາສີ-ອາກອນລາຍໄດ້ ແລະ ນະໂຍບາຍອື່ນໆ ຂອງພະນັກງານໂຄງການເກັບກູ້ລະເບີດແຫ່ງຊາດ;

18. ຈັດກອງປະຊຸມສຳມະນາ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບການຄຸ້ມຄອງວຽກງານການເງິນ-ການບັນຊີ;
19. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຜູ້ອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ;
20. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 10 ໜ່ວຍງານແຜນການ ແລະ ການຮ່ວມມືສາກົນ**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງລັດຖະບານ ແລະລະບຽບການສະເພາະ ທີ່ໄດ້ຕົກລົງກັນລະຫວ່າງ ລັດຖະບານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ບັນດາຄູ່ຮ່ວມງານອື່ນໆ ກ່ຽວກັບວຽກງານແຜນການ ແລະ ການຮ່ວມມືສາກົນ ແຕ່ລະໄລຍະ;
2. ເປັນເຈົ້າການໃນການຄົ້ນຄວ້າ ແລະ ປະສານງານກັບໜ່ວຍງານທີ່ກ່ຽວຂ້ອງພາຍໃນໂຄງການ ເພື່ອປັບປຸງແຜນຍຸດທະສາດການຮ່ວມມື ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ແລະ ກັບບັນດາປະເທດຜູ້ໃຫ້ທຶນໃນແຕ່ລະໄລຍະ;
3. ເປັນເຈົ້າການໃນການຄົ້ນຄວ້າຮ່າງສັນຍາຮ່ວມມື-ເອກະສານຮ່ວມມື, ບົດບັນທຶກຄວາມເຂົ້າໃຈລະຫວ່າງໂຄງການເກັບກູ້ລະເບີດແຫ່ງຊາດ ກັບ ບັນດາປະເທດຜູ້ໃຫ້ທຶນ ໃນຂອບການຮ່ວມມືຫຼາຍຝ່າຍ, ສອງຝ່າຍ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ບັນດາມູນນິທິຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
4. ເປັນໃຈກາງໃນການປະສານງານ ແລະ ສັງລວມການສ້າງແຜນວຽກ ແລະ ແຜນງົບປະມານປະຈຳປີ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
5. ເປັນໃຈກາງໃນການປະສານງານລະຫວ່າງ ໂຄງການເກັບກູ້ລະເບີດແຫ່ງຊາດ ແລະ ບັນດາຄູ່ຮ່ວມງານໃນຂົງເຂດຕ່າງໆ ເພື່ອກະກຽມກອງປະຊຸມປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ, ທົບທວນໄລຍະເຄິ່ງໂຄງການ ແລະ ສິ້ນສຸດໂຄງການ;
6. ກະກຽມບົດສະເໜີໂຄງການ ເພື່ອສະເໜີຂໍທຶນຈາກ ລັດຖະບານ ແລະ ບັນດາຜູ້ໃຫ້ທຶນ ໃນຂົງເຂດຕ່າງໆເປັນແຕ່ລະໄລຍະ;
7. ຕິດຕາມການຈັດຕັ້ງປະຕິບັດແຜນວຽກ ແລະ ແຜນງົບປະມານ ປະຈຳເດືອນ, ປະຈຳໄຕມາດ, ປະຈຳ 06 ເດືອນ ແລະ ປະຈຳປີ ລວມທັງບັນດາໂຄງການຮ່ວມມືຕ່າງໆ ລະຫວ່າງ ໂຄງການເກັບກູ້ລະເບີດແຫ່ງຊາດ ແລະ ຄູ່ຮ່ວມງານ;
8. ກະກຽມບົດລາຍງານ ປະຈຳເດືອນ, ປະຈຳໄຕມາດ, ປະຈຳ 06 ເດືອນ, ປະຈຳປີ ແລະ ບົດລາຍງານສິ້ນສຸດໂຄງການ ເພື່ອລາຍງານຕໍ່ລັດຖະບານ, ບັນດາຄູ່ຮ່ວມງານ ແລະ ບັນດາປະເທດຜູ້ໃຫ້ທຶນ;
9. ເຂົ້າຮ່ວມການປະເມີນຄວາມຄືບໜ້າ, ຜົນສຳເລັດ ແລະ ການສິ້ນສຸດ ຂອງການຈັດຕັ້ງປະຕິບັດບັນດາໂຄງການໃນຂອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ;
10. ປະສານງານກັບບັນດາປະເທດຜູ້ໃຫ້ທຶນ ແລະ ກະກຽມຕ້ອນຮັບຄະນະຜູ້ແທນຈາກພາກລັດ ແລະ ບັນດາອົງການຈັດຕັ້ງຕາງໜ້າ ຂອງບັນດາປະເທດຜູ້ໃຫ້ທຶນທີ່ຈະເຂົ້າມາຢ້ຽມຢາມ ແລະ ແລກປ່ຽນບົດຮຽນກັບໂຄງການເກັບກູ້ລະເບີດແຫ່ງຊາດ ຕາມລະບຽບການ;
11. ປະສານງານ ແລະ ຄຸ້ມຄອງ ບັນດາຫ້ອງການຕາງໜ້າຜູ້ໃຫ້ທຶນທີ່ປະຈຳຢູ່ ຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານການເກັບກູ້ລະເບີດບໍ່ທັນແຕກ;
12. ຈັດກອງປະຊຸມສຳມະນາ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ ໃນວຽກງານແຜນການ ແລະ ການຮ່ວມມືສາກົນ;

13. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສໍາມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຜູ້ອໍານວຍການໂຄງການເກັບກູ້ລະເບີດແຫ່ງຊາດ;
14. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 11 ໜ່ວຍງານປະຊາສໍາພັນ**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ຂອງລັດຖະບານ ແລະ ຂອງຄູ່ຮ່ວມງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ກ່ຽວກັບວຽກງານໂຄສະນາ ແລະ ປະຊາສໍາພັນ;
2. ເປັນເຈົ້າການສ້າງ ແລະ ຈັດພິມປຶ້ມບົດລາຍງານ-ແຜນການປະຈໍາປີ, ເຄື່ອງທີ່ລະນຶກ ແລະ ສື່ສິ່ງພິມຕ່າງໆ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເພື່ອໂຄສະນາທີ່ມາ ແລະ ຜົນຮ້າຍຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ແນໃສ່ເພື່ອລະດົມການຊ່ວຍເຫຼືອດ້ານທຶນຮອນ ແລະ ດ້ານເຕັກນິກວິຊາການ ຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
3. ຄົ້ນຄວ້າ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບວຽກງານທີ່ພົ້ນເດັ່ນ, ຄວາມຄືບໜ້າ ແລະ ຜົນສໍາເລັດ ຂອງການຈັດຕັ້ງປະຕິບັດວຽກງານ ໂຄງການເກັບກູ້ລະເບີດແຫ່ງຊາດ ຜ່ານສື່ຕ່າງໆເຊັ່ນ: ໜັງສືພິມ, ວາລະສານ, ວິທະຍຸ, ໂທລະພາບ, ເວັບໄຊ ແລະ ສື່ສັງຄົມອື່ນໆ;
4. ຄົ້ນຄວ້າ, ກະກຽມ ແລະ ເຂົ້າຮ່ວມການວາງສະແດງໃນພິທີສໍາຄັນຕ່າງໆ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ, ຂອງຫ້ອງການຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ແລະ ຂອງພາກສ່ວນອື່ນໆທີ່ກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;
5. ປະສານສົມທົບກັບຫ້ອງການຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃນການຈັດຕັ້ງງານສະເຫຼີມສະຫຼອງວັນສົນທິສັນຍາວ່າດ້ວຍ ການເກືອດຫ້າມລະເບີດລູກຫວ່ານ, ວັນສໍາຄັນຕ່າງໆ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ແລະ ພິທີອື່ນໆ ຕາມການເຊື້ອເຊີນ ຂອງພາກສ່ວນອື່ນ ແລະ ຕາມການມອບໝາຍຂອງຄະນະອໍານວຍການ;
6. ສະໜອງຂໍ້ມູນ, ສິ່ງພິມ, ເຄື່ອງທີ່ລະນຶກ, ຮູບພາບ, ວີດີໂອ ແລະ ສິ່ງອໍານວຍຄວາມສະດວກອື່ນໆ ໃຫ້ແກ່ຫ້ອງວາງສະແດງລະເບີດ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໃນຂອບເຂດທົ່ວປະເທດ ແລະ ຕາມການສະເໜີ ຂອງພາກສ່ວນກ່ຽວຂ້ອງ ພາຍໃຕ້ການຕົກລົງເຫັນດີ ແລະ ອະນຸມັດຂອງຜູ້ອໍານວຍການ;
7. ຄົ້ນຄວ້າ, ຈັດກອງປະຊຸມ-ສໍາມະນາ ແລະ ຝຶກອົບຮົມ ໃຫ້ແກ່ພະນັກງານໂຄງການເກັບກູ້ລະເບີດແຫ່ງຊາດປະຈໍາ 09 ແຂວງ ເພື່ອສ້າງຄວາມເຂັ້ມແຂງດ້ານວຽກງານປະຊາສໍາພັນ;
8. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສໍາມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຜູ້ອໍານວຍການ;
9. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 12 ໜ່ວຍງານສະໜອງ ແລະ ຈັດຊື້**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງລັດຖະບານ ແລະ ລະບຽບການສະເພາະ ທີ່ໄດ້ຕົກລົງກັນ ລະຫວ່າງ ລັດຖະບານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ບັນດາຄູ່ຮ່ວມງານອື່ນໆ ກ່ຽວກັບວຽກງານສະໜອງ ແລະ ຈັດຊື້ ແຕ່ລະໄລຍະ;
2. ເປັນເຈົ້າການປະສານສົມທົບກັບບັນດາໜ່ວຍງານ, ຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈໍາແຂວງ ໃນການສ້າງແຜນ ເພື່ອສັງລວມ ແລະ ຂຶ້ນແຜນຈັດຊື້ພາຫະນະ, ວັດຖຸອຸປະກອນ ແລະ ເຄື່ອງມືຮັບໃຊ້ໂຄງການເກັບກູ້ລະເບີດແຫ່ງຊາດ ທັງພາກບໍລິຫານຫ້ອງການ ແລະ ພາກປະຕິບັດງານສະໜາມ;

3. ຄົ້ນຄວ້າແກ້ໄຂເອກະສານຂໍອະນຸຍາດນໍາເຂົ້າ, ຍົກເວັ້ນພາສີ ແລະ ປະຕິບັດການບໍາລຸງຮັກສາ, ສ້ອມແປງ ຊັບສິນບັດຕ່າງໆ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນປົກກະຕິແຕ່ລະໄລຍະ;
4. ຕິດຕາມ, ກວດກາ ແລະ ຄຸ້ມຄອງຊັບສິນ, ການນໍາໃຊ້, ການເກັບມ້ຽນ ແລະ ການຮັກສາຄວາມປອດໄພ ໃຫ້ພາຫະນະ ແລະ ວັດຖຸອຸປະກອນຮັບໃຊ້ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
5. ຄຸ້ມຄອງ ແລະ ນໍາໃຊ້ຖານຂໍ້ມູນຄຸ້ມຄອງຊັບສິນ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
6. ຄຸ້ມຄອງລະບົບສາງ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ;
7. ອໍານວຍຄວາມສະດວກໃຫ້ແກ່ບັນດາຄູ່ຮ່ວມງານ ກ່ຽວກັບການປະກອບເອກະສານຂໍອະນຸຍາດນໍາເຂົ້າ ພາຫະນະ ແລະ ວັດຖຸອຸປະກອນຮັບໃຊ້ ທັງພາກຫ້ອງການ ແລະ ພາກສະໜາມ ຕາມລະບຽບການ;
8. ຂຶ້ນແຜນງົບປະມານ ແລະ ແຜນສ້ອມແປງພາຫະນະ, ວັດຖຸອຸປະກອນ, ເຄື່ອງມືຮັບໃຊ້, ອາຄານ ສະຖານທີ່ພັກອາໄສ ແລະ ຫ້ອງການເຮັດວຽກ;
9. ຄຸ້ມຄອງ ແລະ ຕິດຕາມການນໍາໃຊ້ນໍ້າມັນ ພາກຫ້ອງການ ແລະ ການປະຕິບັດງານພາກສະໜາມ;
10. ປະສານສົມທົບກັບບັນດາໜ່ວຍງານ ແລະ ຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈໍາແຂວງ ເພື່ອ ແກ້ໄຂບັນຫາທີ່ກ່ຽວຂ້ອງກັບ ວຽກງານສະໜອງ ແລະ ຈັດຊື້ໃຫ້ທັນກັບສະພາບ ແລະ ຄວາມຕ້ອງການ ຂອງວຽກງານ;
11. ຄົ້ນຄວ້າ ແລະ ສັງລວມບັນຊີຊັບສິນ ເພື່ອຂໍທິດຊີ້ນໍາຈາກຜູ້ອໍານວຍການ ໃນການຊໍາລະສະສາງພາຫະນະ ແລະ ວັດຖຸອຸປະກອນຮັບໃຊ້ ທີ່ໃຊ້ການບໍ່ໄດ້ ຫຼື ນໍາໃຊ້ບໍ່ມີປະສິດທິຜົນ;
12. ຈັດກອງປະຊຸມສໍາມະນາ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານກ່ຽວຂ້ອງ ທັງຂັ້ນສູນ ກາງ ແລະ ຂັ້ນແຂວງ ກ່ຽວກັບວຽກງານສະໜອງ ແລະ ຈັດຊື້;
13. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສໍາມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງ ຜູ້ອໍານວຍການ;
14. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 13 ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງລັດຖະບານ ແລະ ລະບຽບການສະເພາະ ທີ່ໄດ້ຕົກລົງກັນ ລະຫວ່າງ ລັດຖະບານ, ອົງການສະຫະປະຊາຊາດ ເພື່ອການ ພັດທະນາ ແລະ ບັນດາຄູ່ຮ່ວມງານອື່ນໆ ກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ ທັນແຕກ ແຕ່ລະໄລຍະ;
2. ເປັນເຈົ້າການຄົ້ນຄວ້າ, ສ້າງແຜນງານ, ໂຄງການ ແລະ ແບບແຜນການເຮັດວຽກ ກ່ຽວກັບວຽກງານໂຄສະນາ ສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ ເພື່ອໂຄສະນາທີ່ມາ ແລະ ໄພອັນຕະລາຍ ຂອງລະເບີດບໍ່ທັນ ແຕກທີ່ຕົກຄ້າງ ຢູ່ພາຍໃນຂອບເຂດການປະຕິບັດງານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນປະຈໍາ ແຕ່ລະໄລຍະ;
3. ຕິດຕາມຊຸກຍູ້, ປະເມີນຜົນ ແລະ ສະຫຼຸບລາຍງານ ການເຄື່ອນໄຫວວຽກງານໂຄສະນາສຶກສາຄວາມສ່ຽງ ໄພຈາກລະເບີດບໍ່ທັນແຕກ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນປະຈໍາແຕ່ລະໄລຍະ;
4. ຄົ້ນຄວ້າ, ປັບປຸງ ແລະ ພັດທະນາວິທີການ ແລະ ອຸປະກອນ ສໍາລັບວຽກງານໂຄສະນາສຶກສາຄວາມສ່ຽງ ໄພຈາກລະເບີດບໍ່ທັນແຕກ ກ່ຽວກັບທີ່ມາ ແລະ ໄພອັນຕະລາຍ ຂອງລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ເພື່ອເຕືອນສະຕິ ແລະ ຫັນປ່ຽນພຶດຕິກໍາ ຂອງປະຊາຊົນບັນດາເຜົ່າໃຫ້ສາມາດດໍາລົງຊີວິດຢູ່ໃນ ເຂດທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຢ່າງປອດໄພ ແລະ ໃຫ້ສອດຄ່ອງ ກັບສະພາບຄວາມເປັນຈິງ ໃນແຕ່ລະໄລຍະ;

5. ຕິດຕາມຊຸກຍູ້ ແລະ ລາຍງານ ການເກີດອຸປະຕິເຫດຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ເຂົ້າຖານຂໍ້ມູນຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນປະຈຳ ເພື່ອສັງລວມ ແລະ ລາຍງານໃຫ້ບັນດາອົງການຈັດຕັ້ງ ທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ;
6. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກຳນົດແຜນຄວາມຕ້ອງການພະນັກງານໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ ໃນແຕ່ລະໄລຍະ;
7. ມີສ່ວນຮ່ວມການຈັດຕັ້ງປະຕິບັດສັນຍາຮ່ວມມື ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ;
8. ຈັດກອງປະຊຸມສຳມະນາ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ;
9. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຜູ້ອຳນວຍການ;
10. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 14 ໜ່ວຍງານສຳຫຼວດ ແລະ ເກັບກູ້**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ຍຸດທະສາດແຫ່ງຊາດ ແລະ ລະບຽບກົດໝາຍຂອງ
ລັດຖະບານ ກ່ຽວກັບວຽກງານປະຕິບັດງານພາກສະໜາມ ໃນການສຳຫຼວດ ແລະ ເກັບກູ້ລະເບີດບໍ່ທັນແຕກ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນແຕ່ລະໄລຍະ;
2. ປະສານສົມທົບພາກສ່ວນກ່ຽວຂ້ອງ ຂອງສູນກາງ ແລະ ທ້ອງຖິ່ນ ໃນການສ້າງແຜນບູລິມະສິດການສຳຫຼວດ ແລະ ເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະທ້ອງຖິ່ນ ໃນແຕ່ລະໄລຍະ;
3. ເປັນເຈົ້າການຕິດຕາມ, ກວດກາ, ຄຸ້ມຄອງ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດການສຳຫຼວດ ແລະ ເກັບກູ້ ຢູ່ພາກສະໜາມ ຂອງຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳແຕ່ລະແຂວງ;
4. ເປັນເຈົ້າການຄົ້ນຄວ້າ, ປັບປຸງ ແລະ ພັດທະນາ ມາດຕະຖານການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໂດຍສອດຄ່ອງກັບມາດຕະຖານແຫ່ງຊາດ;
5. ປະສານສົມທົບພາກສ່ວນກ່ຽວຂ້ອງທາງພາກລັດ ແລະ ຄູ່ຮ່ວມງານ ໃນການຄົ້ນຄວ້າ, ທົດລອງ, ນຳໃຊ້ເຕັກໂນໂລຊີ ແລະ ອຸປະກອນໃໝ່ ເພື່ອຮັບໃຊ້ເຂົ້າໃນວຽກງານການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
6. ປະສານສົມທົບກັບພາກສ່ວນ ແລະ ໜ່ວຍງານທີ່ກ່ຽວຂ້ອງ ໃນການຂຶ້ນແຜນປະຕິບັດງານ, ແຜນບຸກຄະລາກອນ ແລະ ແຜນງົບປະມານ ໃນການເກັບກູ້ ແລະ ທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ແບບສຸກເສີນຕາມການສະເໜີ ຂອງພາກສ່ວນກ່ຽວຂ້ອງ;
7. ປະສານສົມທົບ ກັບບັນດາຄູ່ຮ່ວມງານ ແລະ ອົງການປະຕິບັດງານ ໃນການດຳເນີນການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
8. ປະສານສົມທົບກັບໜ່ວຍງານກ່ຽວຂ້ອງ ກວດກາ ແລະ ຢັ້ງຢືນ ບົດລາຍງານຜົນສຳເລັດວຽກງານ ການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້

ລະເບີດແຫ່ງຊາດ ກ່ອນລາຍງານເຂົ້າຖານຂໍ້ມູນແຫ່ງຊາດ (IMSMA) ຂອງຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ;

9. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກຳນົດແຜນຄວາມຕ້ອງການພະນັກງານພາກສະໜາມ ໃນແຕ່ລະໄລຍະ;
10. ເປັນເຈົ້າການຈັດກອງປະຊຸມວິຊາການ ວຽກງານການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
11. ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດສັນຍາຮ່ວມມືກັບ ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
12. ຈັດກອງປະຊຸມສຳມະນາ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບວຽກງານ ການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ;
13. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກ ຕາມການມອບໝາຍຂອງຜູ້ອຳນວຍການ;
14. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 15 ໜ່ວຍງານຖານຂໍ້ມູນ ແລະ ໄອທີ**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ມາດຕະຖານແຫ່ງຊາດ, ຍຸດທະສາດ ແລະ ລະບຽບກົດໝາຍ ຂອງລັດຖະບານ ກ່ຽວກັບວຽກງານຖານຂໍ້ມູນ ແລະ ໄອທີ ຂອງວຽກງານການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ມາເປັນອັນລະອຽດ;
2. ເປັນເຈົ້າການຄົ້ນຄວ້າ, ສ້າງ ແລະ ພັດທະນາວຽກງານການເກັບກຳ ແລະ ການຄຸ້ມຄອງລະບົບຖານຂໍ້ມູນກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນປະຈຳແຕ່ລະໄລຍະ;
3. ເປັນເຈົ້າການຕິດຕາມກວດກາ ແລະ ສົມທົບກັບພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການຄຸ້ມຄອງຖານຂໍ້ມູນ ຂອງວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
4. ຄົ້ນຄວ້າ, ປັບປຸງ ແລະ ພັດທະນາ ແບບຟອມເກັບກຳຂໍ້ມູນວຽກງານການແກ້ໄຂບັນຫາລະເບີດບໍ່ທັນແຕກເພື່ອສັງລວມ ແລະ ລາຍງານການປະຕິບັດງານພາກສະໜາມ ເຂົ້າໃນຖານຂໍ້ມູນ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນປະຈຳ ເພື່ອລາຍງານໃຫ້ແກ່ ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ;
5. ຄຸ້ມຄອງ ແລະ ບຳລຸງຮັກສາລະບົບພື້ນຖານໂຄງລ່າງຂອງລະບົບໄອທີ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ທັງຂັ້ນສູນກາງ ແລະ ຂັ້ນແຂວງ ໃຫ້ມີຄວາມສະດວກ ແລະ ສາມາດຕອບສະໜອງດ້ານວຽກງານວິຊາສະເພາະ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
6. ຮ່ວມມືກັບຄູ່ຮ່ວມງານໃນການພັດທະນາລະບົບການຄຸ້ມຄອງຖານຂໍ້ມູນ ດ້ານວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;

7. ເຮັດໜ້າທີ່ໃນການສະໜອງຂໍ້ມູນທີ່ຈຳເປັນ ກ່ຽວກັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາກລັດ ແລະ ບັນດາຄູ່ຮ່ວມງານ ຕາມການຊີ້ນຳຂອງຜູ້ອຳນວຍການ;
8. ເປັນເຈົ້າການຈັດກອງປະຊຸມວິຊາການ ດ້ານວຽກງານຄຸ້ມຄອງຖານຂໍ້ມູນ ກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນປະຈຳແຕ່ລະໄລຍະ;
9. ເປັນເຈົ້າການຈັດຕັ້ງປະຕິບັດສັນຍາຮ່ວມມືກັບ ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກຄຸ້ມຄອງຖານຂໍ້ມູນ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
10. ຈັດກອງປະຊຸມສຳມະນາ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບວຽກງານຄຸ້ມຄອງຖານຂໍ້ມູນວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
11. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຜູ້ອຳນວຍການ;
12. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 16 ໜ່ວຍງານກວດກາຄຸນນະພາບ**

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ຍຸດທະສາດ ແລະ ລະບຽບກົດໝາຍ ຂອງລັດຖະບານ ກ່ຽວກັບການກວດກາຄຸນນະພາບ ແລະ ມາດຕະຖານ ວຽກງານການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ມາເປັນອັນລະອຽດ;
2. ຄົ້ນຄວ້າສ້າງແຜນການ, ແຜນງານ ໃນການດຳເນີນກວດກາພາຍໃນ ທັງພາກບໍລິຫານຫ້ອງການ ແລະ ການປະຕິບັດງານພາກສະໜາມ ໃນແຕ່ລະໄລຍະ;
3. ປະສານສົມທົບກັບໜ່ວຍງານກ່ຽວຂ້ອງ ແລະ ເປັນເຈົ້າການຄົ້ນຄວ້າ ແລະ ສະເໜີປັບປຸງມາດຕະຖານລະບຽບການປະຕິບັດງານ (SOPs) ເຊັ່ນ: ການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ, ການແພດ, ການສຳຫຼວດ, ການເກັບກູ້ ແລະ ການທຳລາຍລະເບີດບໍ່ທັນແຕກ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ແຕ່ລະໄລຍະ;
4. ເປັນເຈົ້າການໃນການດຳເນີນການກວດກາການຈັດຕັ້ງປະຕິບັດວຽກງານພາກບໍລິຫານຫ້ອງການ, ປະສານງານ ແລະ ອຳນວຍຄວາມສະດວກໃຫ້ແກ່ ຄະນະກວດສອບຈາກພາຍນອກ ເພື່ອກວດກາການນຳໃຊ້ງົບປະມານ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
5. ເປັນເຈົ້າການໃນການດຳເນີນການກວດກາຄ້ຳປະກັນຄຸນນະພາບ (Quality Assurance ຂຽນຫຍໍ້ “QA”) ແລະ ກວດກາຄວບຄຸມຄຸນນະພາບ (Quality Control ຂຽນຫຍໍ້ “QC”) ຂອງການປະຕິບັດວຽກງານພາກສະໜາມ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ເປັນປະຈຳແຕ່ລະໄລຍະ;
6. ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດາຂໍ້ສັງເກດ ຂອງຄະນະກວດກາຈາກພາຍໃນ ແລະ ພາຍນອກ ໃນວຽກງານພາກບໍລິຫານຫ້ອງການ ແລະ ການປະຕິບັດງານພາກສະໜາມ ຂອງແຕ່ລະພາກສ່ວນກ່ຽວຂ້ອງ;
7. ຈັດກອງປະຊຸມສຳມະນາ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບວຽກງານກວດກາຄຸນນະພາບ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;

8. ເຂົ້າຮ່ວມການທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານກວດກາ ແລະ ຄຸ້ມຄອງຄຸນນະພາບ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຜູ້ອຳນວຍການ;
9. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 17 ຫຼັກການ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານລວມ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ;
2. ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ ແລະ ບຸກຄະລາກອນ ທຸກລະດັບ;
3. ທຸກການເຄື່ອນໄຫວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ ແມ່ນອີງໃສ່ ກົດໝາຍ ແລະ ລະບຽບການ, ຫຼັກ ການລວມ ຂອງກະຊວງ, ຄະນະກຳມະການຄຸ້ມຄອງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຂັ້ນສູນກາງ ແລະ ຄູ່ຮ່ວມງານ ໂດຍມີການຜັນຂະຫຍາຍ ໃຫ້ປະກົດຜົນເປັນຈິງຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 18 ແບບແຜນວິທີເຮັດວຽກ**

1. ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນການພັດທະນາແຕ່ລະໄລຍະ, ມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງຕ່າງໆ ຢ່າງແໜ້ນແຟ້ນ;
2. ເຮັດວຽກມີການຕິດຕາມ, ຊຸກຍູ້, ກວດກາ, ປະເມີນຜົນ ແລະ ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ, ຜົນເສຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, ປະຈຳໄຕມາດ, ປະຈຳ 06 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການ ເພື່ອລາຍງານໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານກັບ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

**ມາດຕາ 19 ການລາຍງານ**

1. ໂຄງການເກັບກູ້ລະເບີດແຫ່ງຊາດ ລາຍງານຄວາມຄືບໜ້າ ແລະ ຜົນສຳເລັດ ຂອງການປະຕິບັດງານພາກບໍລິຫານຫ້ອງການ ແລະ ການປະຕິບັດງານພາກສະໜາມ ໃຫ້ແກ່ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ປະຈຳເດືອນ, ປະຈຳໄຕມາດ, ປະຈຳ 06 ເດືອນ ແລະ ປະຈຳປີ;
2. ໂຄງການເກັບກູ້ລະເບີດແຫ່ງຊາດ ຕ້ອງໄດ້ເຮັດບົດລາຍງານສະເພາະ ໃຫ້ແກ່ບັນດາປະເທດຜູ້ໃຫ້ທຶນ ແລະ ບັນດາຄູ່ຮ່ວມງານ ຕາມທີ່ໄດ້ກຳນົດໄວ້ໃນເອກະສານບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາການຮ່ວມມື ໃນແຕ່ລະໄລຍະ.

## ໝວດທີ 6
## ກາໝາຍ ແລະ ເຄື່ອງແບບ

**ມາດຕາ 20 ກາໝາຍ**

ໂຄງການເກັບກູ້ລະເບີດແຫ່ງຊາດ ມີກາໝາຍສະເພາະໂດຍໄດ້ຮັບການຮັບຮອງຈາກ ທ່ານປະທານຄະນະກຳມະການຄຸ້ມຄອງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຂັ້ນສູນກາງ.

**ມາດຕາ 21 ເຄື່ອງແບບ**

ພະນັກງານໂຄງການເກັບກູ້ລະເບີດແຫ່ງຊາດ ທັງພາກຫ້ອງການ ແລະ ພາກສະໜາມ ແຕ່ສູນກາງຮອດທ້ອງຖິ່ນ ມີເຄື່ອງແບບສະເພາະໃນການປະຕິບັດໜ້າທີ່ຂອງຕົນ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 22 ງົບປະມານ ແລະ ຕາປະທັບ**

1. ໂຄງການເກັບກູ້ລະເບີດແຫ່ງຊາດ ມີງົບປະມານ ສໍາລັບບໍລິຫານ ແລະ ປະຕິບັດງານເປັນຂອງຕົນເອງ ເຊິ່ງໄດ້ມາຈາກການຊ່ວຍເຫຼືອ ຂອງບັນດາປະເທດຜູ້ໃຫ້ທຶນ, ບັນດາຄູ່ຮ່ວມງານ ແລະ ການປະກອບສ່ວນຂອງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ. ນອກຈາກນີ້, ຍັງມີງົບປະມານຈໍານວນໜຶ່ງ ທີ່ໄດ້ຈາກການຈັດສັນງົບປະມານ ຂອງລັດຖະບານ ໂດຍຜ່ານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ໂຄງການເກັບກູ້ລະເບີດແຫ່ງຊາດ ມີຕາປະທັບເປັນຂອງຕົນເອງ ເພື່ອຮັບໃຊ້ວຽກງານທາງລັດຖະການ ຕາມລະບຽບການກໍານົດ.

**ມາດຕາ 23 ການຜັນຂະຫຍາຍ**

ມອບໃຫ້ໂຄງການເກັບກູ້ລະເບີດແຫ່ງຊາດ ກໍານົດພາລະບົດບາດ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການໂຄງການເກັບກູ້ລະເບີດແຫ່ງຊາດ ປະຈໍາແຂວງ.

**ມາດຕາ 24 ການຈັດຕັ້ງປະຕິບັດ**

ຫ້ອງການກະຊວງ, ບັນດາກົມ, ຫ້ອງການຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, ໂຄງການເກັບກູ້ລະເບີດແຫ່ງຊາດ, ຄະນະກໍາມະການຄຸ້ມຄອງເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ຂັ້ນແຂວງ ແລະ ບັນດາການຈັດຕັ້ງທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນພາລະບົດບາດ, ໜ້າທີ່ ແລະ ການຈັດຕັ້ງ ຂອງອົງການເກັບກູ້ລະເບີດແຫ່ງ ສປປ ລາວ ສະບັບລົງວັນທີ 04 ທັນວາ 1996.

**ລັດຖະມົນຕີ**

ລັດຖະມົນຕີ

ໃບຄໍາ ຂັດທິຍະ